ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






# Grade 4 English animated audio tracks Media Report
## (14 – 17 March 2023)


ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ, ຕາງໜ້າໃຫ້ລັດຖະບານອົດສະຕຣາລີ

Basic Education Quality and Access in Lao PDR is managed by Tetra Tech International Development, on behalf of the Australian Government.

## Grade 4 English animated audio tracks
## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2023-03-16 | Newspaper | Vientiane Mai | Front and page 7 |
| 2023-03-16 | Newspaper | Vientiane Times | Page 2 |
| 2023-03-17 | Newspaper | KPL Pathet Lao (Lao) | Front and page 2 |
| 2023-04-03 | Newspaper | Economic and Commerce | Page 6 |
| 2023-03-15 | Social Media | Vientiane Mai Facebook | 41K Followers |
| 2023-03-15 | Social Media | KPL Pathet Lao Facebook | 14K Followers |
| 2023-03-16 | Social Media | Edu-Sport TV online Facebook | 63K Followers |
| 2023-03-16 | Social Media | Lao Economic Daily Facebook | 503K Followers |
| 2023-03-16 | Social Media | Vientiane Times Facebook | 59K Followers |
| 2023-03-20 | Social Media | Lao National Radio Facebook | 139K Followers |
| 2023-04-04 | Social Media | Tetra Tech Facebook | 34K Followers |
| 2023-04-04 | Social Media | Tetra Tech Linkedin | 54K Followers |
| 2023-04-07 | Social Media | Education, Sciences and Sports Daily | 6.1K Followers |
| 2023-03-14 | Website | BEQUAL Website | Read article here |
| 2023-03-15 | Website | KPL English Website | Read article here |
| 2023-03-15 | Website | Lao Tribune | Read article here |
| 2023-03-16 | Website | Vientiane Times Website | Read article here |
| 2023-03-16 | Website | Lao Economic Daily Website | Read article here |
| 2023-03-14 | Radio | Lao Youth Radio<br>FM 90.00 MHZ | |
| 2023-03-15 | Radio | Public Security Radio<br>FM 101.5 | |
| 2023-03-15 | Radio | Army Radio<br>FM 99.7 | |
| 2023-03-15 | Radio | Lao National Radio<br>FM 103.7 | |
| 2023-03-17 | Radio | Vientiane Radio<br>FM 105.5 | |
| 2023-03-15 | WhatsApp | MT-PT WhatsApp and FB groups | 19 groups<br>+/- 660 members |
| 2023-03-15 | WhatsApp | PESS-DESB | 18 Provincial groups<br>452 members |
| 2023-03-15 | WhatsApp | ETSP | 3 groups<br>98 members |
| 2023-03-15 | WhatsApp | Pre-Service Writing team | 8 TTCs and 2 universities<br>72 members |

| 2023-03-17 | Newspaper | KPL Pathet Lao (Lao) | Front and page 2 |
|---|---|---|---|

# ຜະລິດສື່ການຮຽນແບບໃໝ່ຜ່ານຢູທູບ ສົ່ງເສີມການຮຽນ-ການສອນວິຊາພາສາອັງກິດ



(Teacher Development Videos)

ອ່ານຕໍ່ໜ້າ 2

ຜະລິດສື່ການຮຽນ...

| 2023-04-03 | Newspaper | Economic and Commerce | Page 6 |
|---|---|---|---|



# ແຜນງານບີຄອາ ຜະລິດສື່ການຮຽນ - ການສອນແບບໃໝ່ ສົ່ງເສີມການຮຽນ ການສອນວິຊາພາສາອັງກິດ ຂັ້ນປະຖົມສຶກສາໃນບັນດາໂຮງຮຽນຕ່າງໆ








Teacher Development Videos

| 2023-03-15 | Vientiane Mai Facebook |
|---|---|

Vientiane Mai
23h ·

ນຳສະເໜີສື່ການຮຽນ-ການສອນວິຊາພາສາອັງກິດສະບັບປັບປຸງໃໝ່ຂອງຊັ້ນປະຖົມສຶກສາ

.....................................................................

ຫຼັກສູດວິຊາພາສາອັງກິດສະບັບປັບປຸງໃໝ່ຂອງຊັ້ນປະຖົມປີທີ 4 ແມ່ນໄດ້ຮັບການພັດທະນາໂດຍ ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ໄດ້ນຳໃຊ້ວິທີການເພື່ອການສື່ສານ ທີ່ຊ່ວຍໃຫ້ນັກຮຽນນຳໃຊ້ພາສາອັງກິດ ແລະ ສາມາດສື່ສານຕາມສະຖານະການຕົວຈິງ.

ທ່ານ ນາງ ມະໂນລີ ຄົງວັນ ຂອງຜູ້ອຳນວຍການສູນສົ່ງເສີມພາສາຕ່າງປະເທດ ໄດ້ອະທິບາຍວ່າ "ຫຼັງຈາກທີ່ນັກຮຽນໄດ້ຮຽນຄຳສັບໃໝ່ ນັກຮຽນຈະຕ້ອງໄດ້ຝຶກການນຳໃຊ້ຄຳສັບເຫຼົ່ານັ້ນເພື່ອທີ່ຈະສາມາດນຳໃຊ້ຄຳສັບໃໝ່ເຫຼົ່ານັ້ນເຂົ້າໃນການສົນທະນາ ໃນຊີວິດຕົວຈິງ ເປັນຊ່ອງທາງໜຶ່ງທີ່ຈະຊ່ວຍໃຫ້ຄູໄດ້ເຂົ້າເຖິງວິທີການສິດສອນເພື່ອຊ່ວຍໃຫ້ການຮຽນ-ການສອນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ດັ່ງນັ້ນ ເມື່ອໄດ້ເລີ່ມຕົ້ນພັດທະນາປຶ້ມຮຽນວິຊາພາສາອັງກິດຊັ້ນປ3 ກໍ່ໄດ້ຜະລິດສື່ທີ່ເປັນຄລິບສຽງເພື່ອຊ່ວຍຄູ ແລະ ນັກຮຽນ" ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ສືບຕໍ່ສ້າງ 105 ຟາຍສຽງວິຊາພາສາອັງກິດຊັ້ນ ປ4 ທີ່ເປັນວີດີໂອ ຜ່ານຊ່ອງທາງຢູທູບວີດີໂອສຳລັບການພັດທະນາຄູ Teacher Development Videos ໃນປຶ້ມຄູ່ມືຄູວິຊາພາສາອັງກິດຂອງຊັ້ນ ປ4 ແມ່ນລວມມີຄຳແນະນຳກ່ຽວກັບບັນດາຟາຍສຽງທີ່ນຳໃຊ້ ແລະ ລາຍລະອຽດຂອງສຽງທີ່ຢູ່ໃນວິຊາພາສາອັງກິດ ແລະ ວິຊາພາສາລາວ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປັດຈຸບັນນີ້ແມ່ນໄດ້ເລີ່ມອັດສຽງເພື່ອປະກອບເຂົ້າໃນຫຼັກສູດຊັ້ນປະຖົມສຶກສາປີທີ 5 ທີ່ກຳລັງຈະອອກມາໃນໄວໆນີ້.

ບັນດາສື່ການຮຽນ-ການສອນແມ່ນຍັງໄດ້ຖືກເຜີຍແຜ່ຜ່ານທາງຊ່ອງໂທລະພາບສຶກສາ ທີ່ໄດ້ອອກອາກາດ ກາຍຜ່ານທາງດາວທຽມລາວແຊັດ ຊ່ອງ 8 ໃນແທັບເລັດ ທີ່ໄດ້ແຈກຢາຍໃຫ້ແກ່ບັນດາເມືອງເປົ້າໝາຍ ໃນຢູເອສບີ ທີ່ໄດ້ແຈກຢາຍໃຫ້ແກ່ຄູ ແລະ ແພຼດຟອມ ຕັ້ງປັນຍາລາວ".

#vientianemai




| 2023-03-15 | KPL Pathet Lao Facebook |
|---|---|

ຂ່າວ KPL Laos News
March 15 at 10:54 AM ·

MoES, Australian release new materials on YouTube to support English teaching in primary schools

(KPL) The new Grade 4 English primary curriculum developed by the Ministry of Education and Sports (MoES), with support from the Australian Government through the BEQUAL programme, has been designed using a communicative approach to help students use English and communicate in real-life situations.

There is a strong focus on developing listening and speaking skills to provide students with plenty of exposure to English and to develop the oral language skill required to support reading and writing. But pronouncing the sounds and words in English is a new and difficult skill for most teachers in Laos. Without any modelling, teachers won't know how to pronounce the sounds correctly and thus won't be able to teach them.

https://kpl.gov.la/En/Detail.aspx?id=71967



| 2023-03-16 | Edu-Sport TV online Facebook |
| --- | --- |

**Edu-Sport TV online**
22 hrs ·

ພາຍສຽງໃນວິຊາພາສາອັງກິດຂອງຊັ້ນປະຖົມສຶກສາປີທີ 4 ຫຼາຍກວ່າ 100 ສຽງ ໄດ້ສ້າງເປັນວິດີໂອ ແລະ ອັບໂຫຼດລົງທາງຊ່ອງທາງຢູທູບ ທີ່ມີຊື່ວ່າ "ວິດີໂອສຳລັບການພັດທະນາຄູ Teacher Development Videos"
//////////////////
ຫຼັກສູດວິຊາພາສາອັງກິດສະບັບປັບປຸງໃໝ່ຂອງຊັ້ນປະຖົມປີທີ 4 ແມ່ນໄດ້ຮັບການພັດທະນາໂດຍ ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ, ໄດ້ນຳໃຊ້ ວິທີການເພື່ອການສື່ສານ ທີ່ຊ່ວຍໃຫ້ນັກຮຽນນຳໃຊ້ພາສາອັງກິດ ແລະ ສາມາດສື່ສານຕາມສະຖານະການຕົວຈິງ. ຫຼັກສູດຊັ້ນປະຖົມໃໝ່ນີ້ໄດ້ເນັ້ນໜັກໃຫ້ມີການພັດທະນາທັກສະທາງດ້ານການຟັງ ແລະ ການເວົ້າ. ເພື່ອໃຫ້ນັກຮຽນໄດ້ມີໂອກາດນຳໃຊ້ພາສາອັງກິດ ແລະ ພັດທະນາທັກສະການປາກເວົ້າ ນັກຮຽນແມ່ນຈະໄດ້ຮັບການຊ່ວຍເຫຼືອດ້ວຍການອ່ານ ແລະ ການຂຽນ. ແຕ່ເນື່ອງຈາກວ່າ ການອອກສຽງ ແລະ ຄຳສັບໃນພາສາອັງກິດ ແມ່ນຫຍັງໃໝ່ ແລະ ເປັນສິ່ງທີ່ຍາກສຳລັບຄູຫຼາຍຄົນໃນລາວ ຄູຈຶ່ງຕ້ອງການຕົວຢ່າງໃນການສິດສອນເພື່ອອອກສຽງ ແລະ ເວົ້າຄຳສັບພາສາອັງກິດໃຫ້ຖືກຕ້ອງເພື່ອດຳເນີນການຮຽນການສອນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງ 105 ພາຍສຽງວິຊາພາສາອັງກິດຂັ້ນ ປ.4 ທີ່ເປັນວິດີໂອ ຜ່ານຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos. ພາຍສຽງດັ່ງກ່າວ, ແມ່ນເພີ່ມຕື່ມ 101 ພາຍສຽງຂອງວິຊາພາສາອັງກິດຂັ້ນ ປ.3 ເຊິ່ງໄດ້ຜະລິດໃນປີທີ່ຜ່ານມາ. ບັນດາພາຍສຽງແມ່ນສຽງຂອງຜູ້ທີ່ໃຊ້ພາສາອັງກິດເປັນພາສາຫຼັກ, ຫຼາກຫຼາຍອາຍຸ ແລະ ສຽງຄືເຫດການຈິງ. ເຊິ່ງບັນດາສຽງລວມມີພາສາເວົ້າຂອງຄົນຜູ້ດຽວ, ສຽງຂອງບົດສົນທະນາ, ບົດເລື່ອງຕ່າງໆ, ບົດເພງ ແລະ ຕົວຢ່າງການອອກສຽງຂອງບັນດາສຽງໃໝ່. ໃນປຶ້ມຄູ່ມືຄູວິຊາພາສາອັງກິດຂອງຂັ້ນ ປ.4 ແມ່ນລວມມີຄຳແນະນຳກ່ຽວກັບບັນດາພາຍສຽງທີ່ນຳໃຊ້ ແລະ ລາຍລະອຽດຂອງສຽງທີ່ຢູ່ໃນວິຊາພາສາອັງກິດ ແລະ ວິຊາພາສາລາວ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປະຈຸບັນນີ້ ແມ່ນໄດ້ເລີ່ມອັດສຽງເພື່ອປະກອບເຂົ້າໃນຫຼັກສູດຊັ້ນປະຖົມສຶກສາປີທີ 5 ທີ່ກຳລັງຈະອອກມາໃນໄວໆນີ້.

ນອກຈາກນີ້, ບັນດາພາຍສຽງເຫຼົ່ານີ້ ທາງຂະແໜງສື່ເອເລັກໂຕນິກ ແລະ ການສຶກສາທາງໄກ ຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ຜະລິດວິດີໂອສຳລັບການພັດທະນາຄູໃນປີ 2022 ທີ່ໄດ້ສະແດງໃຫ້ຮູ້ເຕັກນິກຄຳແນະນຳການອອກສຽງໃນພາສາອັງກິດ, ການກອດການອອກສຽງທີ່ຖືກຕ້ອງ ແລະ ການຝຶກຂຽນຕົວອັກສອນ ສຳລັບສຽງທີ່ແຕກຕ່າງກັນ ພ້ອມທັງ ບັນດາຕົວອັກສອນທີ່ນັກຮຽນໄດ້ຮຽນໃນຂັ້ນ ປ.3 ແລະ ໃນຂັ້ນ ປ.4. ວິດີໂອຍັງໄດ້ຖືກແປເປັນພາສາມືເພື່ອໃຫ້ສາມາດເຂົ້າໃຈໄດ້ສຳລັບທຸກຄົນ.

ທ່ານ ຄຳຈັນ ວັດທະຍອດ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກ່າວວ່າ: "ຄູຊັ້ນປະຖົມສຶກສາ ແລະ ຄູຝຶກ ຈະໄດ້ນຳໃຊ້ວິດີໂອ ແລະ ສຽງຂອງສື່ການຮຽນ-ການສອນ ເຊິ່ງໄດ້ກະກຽມໃສ່ໃນບົດຮຽນ ແລະ ສຳລັບການຮຽນຮູ້ດ້ວຍຕົນເອງ ເພື່ອຝຶກເຕັກນິກການສອນດ້ວຍຫຼັກສູດໃໝ່ ແລະ ຝຶກການສອນດ້ວຍການປະຕິບັດຕົວຈິງ. ພວກເຂົາສາມາດເປີດພາຍສຽງໄດ້ໂດຍກົງເພື່ອໃຊ້ໃນຫ້ອງຮຽນ".

ປັດຈຸບັນ ມີຍອດຊົມຫຼາຍກວ່າ 2,6 ລ້ານວິວ ຜ່ານທາງຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos". ຕົວເລກຂໍ້ມູນຜູ້ຊົມທີ່ຫຼາຍໃນລະດັບນີ້ ແມ່ນໄດ້ສະແດງໃຫ້ເຫັນວ່າ ຄູສ່ວນຫຼາຍແມ່ນມີຄວາມພໍໃຈຕໍ່ກັບສື່ດັ່ງກ່າວທີ່ສ້າງມາ. ບັນດາສື່ການຮຽນການສອນແມ່ນຍັງໄດ້ຖືກເຜີຍແຜ່ຜ່ານທາງຊ່ອງໂທລະພາບສຶກສາທີ່ໄດ້ອອກອາກາດຜ່ານທາງດາວທຽມລາວແຊັດ ຊ່ອງ 8, ໃນແທັບເລັດ ທີ່ໄດ້ແຈກຢາຍໃຫ້ແກ່ບັນດາເມືອງເປົ້າໝາຍ, ໃນຢູເອສບີ ທີ່ໄດ້ແຈກຢາຍໃຫ້ແກ່ຄູ ແລະ ແພດຟອມ ຕັ້ງປັນຍາລາວ".

ທ່ານສາມາດເຂົ້າເບິ່ງໄດ້ທີ່ນີ້: https://www.youtube.com/watch?v=pXq2Elv02fE



| 2023-03-16 | Lao Economic Daily Facebook |
| --- | --- |

**ຂ່າວເສດຖະກິດ-ການຄ້າ Lao Economic Daily**
3d ·

ແຜນງານບີຄວາ ຜະລິດສື່ການຮຽນ-ການສອນແບບໃໝ່ ສົ່ງເສີມການຮຽນວິຊາພາສາອັງກິດຊັ້ນປະຖົມສຶກສາ ຜ່ານຊ່ອງທາງຢູທູບ

https://laoedaily.com.la/2023/03/16/121676/




LAOEDAILY.COM.LA

**ແຜນງານບີຄວາ ຜະລິດສື່ການຮຽນ-ການສອນແບບໃໝ່ ສົ່ງເສີມການຮຽນວິຊາພາສາອັງກິດຊັ້ນປະຖົມສຶກສາ ຜ່າ**

| 2023-03-16 | Vientiane Times Facebook |
|---|---|

**Vientiane Times**
March 16 at 9:15 AM ·

Online study materials help young English learners make the grade

Primary school teachers and students in state schools are now able to make use of online teaching skills and learning in English, thanks to the support of the governments of Laos and Australia... (Continue to read) https://www.vientianetimes.org.la/.../Cur2023_Online53.php



| 2023-03-20 | Lao National Radio Facebook |
|---|---|

**Lao National Radio**
3h ·

ກະຊວງສຶກສາທິການ ແລະ ກິລາ, ຮ່ວມກັບລັດຖະບານອົດສະຕຣາລີ
ຜະລິດສື່ການຮຽນ-ການສອນແບບໃໝ່ ຜ່ານທາງຊ່ອງທາງຢູທູບ
****************
ຫຼັກສູດວິຊາພາສາອັງກິດສະບັບປັບປຸງໃໝ່ຂອງຊັ້ນປະຖົມປີທີ 4 ແມ່ນໄດ້ຮັບການພັດທະນາໂດຍ ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ, ໄດ້ນຳໃຊ້ ວິທີການເພື່ອການສື່ສານ ທີ່ຊ່ວຍໃຫ້ນັກຮຽນນຳໃຊ້ພາສາອັງກິດ ແລະ ສາມາດສື່ສານຕາມສະຖານະການຕົວຈິງ. ຫຼັກສູດຊັ້ນປະຖົມໃໝ່ນີ້ໄດ້ເນັ້ນໜັກໃຫ້ມີການພັດທະນາທັກສະທາງດ້ານການຟັງ ແລະ ການເວົ້າ. ເພື່ອໃຫ້ນັກຮຽນໄດ້ມີໂອກາດນຳໃຊ້ພາສາອັງກິດ ແລະ ພັດທະນາທັກສະການປາກເວົ້າ ນັກຮຽນແມ່ນຈະໄດ້ຮັບການຊ່ວຍເຫຼືອດ້ວຍການອ່ານ ແລະ ການຂຽນ. ແຕ່ເນື່ອງຈາກວ່າ ການອອກສຽງ ແລະ ຄຳສັບໃນພາສາອັງກິດ ແມ່ນຫຍັງໃໝ່ ແລະ ເປັນສິ່ງທີ່ຍາກສຳລັບຄູຫຼາຍຄົນໃນລາວ ຄູຈຶ່ງຕ້ອງການຕົວຢ່າງໃນການສິດສອນເພື່ອອອກສຽງ ແລະ ເວົ້າຄຳສັບພາສາອັງກິດໃຫ້ຖືກຕ້ອງເພື່ອດຳເນີນການຮຽນການສອນ. ທ່ານ ນາງ ມະໂນລີ ດົງວັນ, ຮອງຜູ້ອຳນວຍການສູນສົ່ງເສີມພາສາຕ່າງປະເທດ ໄດ້ອະທິບາຍວ່າ "ຫຼັງຈາກທີ່ນັກຮຽນໄດ້ຮຽນຄຳສັບໃໝ່, ນັກຮຽນຈະຕ້ອງໄດ້ຝຶກການນຳໃຊ້ຄຳສັບເຫຼົ່ານັ້ນເພື່ອທີ່ຈະສາມາດນຳໃຊ້ຄຳສັບໃໝ່ເຫຼົ່ານັ້ນເຂົ້າໃນການສົນທະນາ, ໃນຊີວິດຕົວຈິງຂອງເຂົາເຈົ້າ. ເພາະສະນັ້ນ, ນີ້ຈຶ່ງເປັນຊ່ອງທາງໜຶ່ງທີ່ຈະຊ່ວຍໃຫ້ຄູໄດ້ເຂົ້າເຖິງວິທີການສິດສອນເພື່ອຊ່ວຍໃຫ້ການຮຽນການສອນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້. ດັ່ງນັ້ນ, ເມື່ອໄດ້ເລີ່ມຕົ້ນພັດທະນາບົດຮຽນວິຊາພາສາອັງກິດຊັ້ນປ.3, ພວກເຮົາກໍ່ໄດ້ຜະລິດສື່ທີ່ເປັນຄລິບສຽງເພື່ອຊ່ວຍຄູ ແລະ ນັກຮຽນ".

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງ 105 ຟາຍສຽງວິຊາພາສາອັງກິດຂັ້ນ ປ.4 ທີ່ເປັນວິດີໂອຜ່ານຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos. ຟາຍສຽງດັ່ງກ່າວ ແມ່ນເພີ່ມຕື່ມ 101 ຟາຍສຽງຂອງວິຊາພາສາອັງກິດຂັ້ນ ປ.3 ເຊິ່ງໄດ້ຜະລິດໃນປີທີ່ຜ່ານມາ. ບັນດາຟາຍສຽງແມ່ນສຽງຂອງຜູ້ທີ່ໃຊ້ພາສາອັງກິດເປັນພາສາຫຼັກ, ຫຼາກຫຼາຍອາຍຸ ແລະ ສຽງຄືເຫດການຈິງ. ເຊິ່ງບັນດາສຽງລວມມີພາກສຽງເວົ້າຂອງຄົນຜູ້ດຽວ, ສຽງຂອງບົດສົນທະນາ, ບົດເລື່ອງຕ່າງໆ, ບົດເພງ ແລະ ຕົວຢ່າງການອອກສຽງຂອງບັນດາສຽງໃໝ່.
ທ່ານ ນາງ ມະໂນລີ ຍັງໄດ້ກ່າວຕື່ມອີກວ່າ: "ການຜະລິດຟາຍເປັນວິດີໂອຈະສາມາດຊ່ວຍຄູສາມາດຝຶກນັກຮຽນໃຫ້ສາມາດອອກສຽງໄດ້ຄືກັບສຽງຈິງ. ພວກເຂົາຈະສາມາດສອນໃຫ້ນັກຮຽນໄດ້ອອກສຽງໃນພາສາອັງກິດທີ່ມີສຽງແຕກຕ່າງກັນ ແລະ ເຮັດໃຫ້ບົດຮຽນມີຄວາມມ່ວນຊື່ນ".
ນອກຈາກນີ້, ບັນດາຟາຍສຽງເຫຼົ່ານີ້ ທາງຂະແໜງສື່ເອເລັກໂຕຼນິກ ແລະ ການສຶກສາທາງໄກ ຂອງສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ ໄດ້ຜະລິດວິດີໂອສຳລັບການພັດທະນາຄູໃນປີ 2022 ທີ່ໄດ້ສະແດງໃຫ້ຮູ້ເຕັກນິກຄຳແນະນຳການອອກສຽງໃນພາສາອັງກິດ, ການກວດການອອກສຽງທີ່ຖືກຕ້ອງ ແລະ ການຝຶກຂຽນຕົວອັກສອນ ສຳລັບສຽງທີ່ແຕກຕ່າງກັນ ພ້ອມທັງ ບັນດາຕົວອັກສອນທີ່ນັກຮຽນໄດ້ຮຽນໃນຂັ້ນ ປ.3 ແລະ ໃນຂັ້ນ ປ.4. ວິດີໂອຍັງໄດ້ຖືກແປເປັນພາສາມືເພື່ອໃຫ້ສາມາດເຂົ້າໃຈໄດ້ສຳລັບທຸກຄົນ.



| 2023-04-04 | Tetra Tech Facebook and Linkedin |
|---|---|

**Tetra Tech International Development Services**
Published by Karla TetraTech · 30 m ·

The Ministry of Education and Sports in Laos has developed a new Grade 4 English primary curriculum with support from the Australian Government through the #BEQUAL program.

The curriculum uses a communicative approach, focusing on developing the skills that are integral to students' reading and writing.

Pronouncing the sounds and words in English presents another challenge for students and teachers.

To provide support with English pronunciation, the Research Institute of Educational Sciences, with support from Australia, has released 105 short, animated Grade 4 audio tracks on the ວິດີໂອສຳລັບການພັດທະນາຄູ Teacher Development Videos YouTube channel.

The audio tracks were recorded by native English speakers and include monologues, dialogues, stories, songs, and model pronunciation of new phonics, which are detailed in The Grade 4 English teacher guide.

Mrs Manoly Dongvan, Deputy Director of Foreign Language Resource Center explains "Using the animated audio materials will enable Lao teachers to give their students plenty of authentic language input..."

Read more here: https://www.bequal-laos.org/the-ministry-of-education.../




| 2023-04-07 | Education, Sciences and Sports Daily Facebook |
|---|---|

**ໜັງສືພິມສຶກສາ-ກິລາລາຍວັນ**
April 7 at 12:56 PM ·

ສສກ-ອົດສະຕຣາລີ ຜະລິດສື່ການຮຽນການສອນວິຊາພາສາອັງກິດແບບໃໝ່ ຊັ້ນປະຖົມສຶກສາ ຜ່ານຊ່ອງທາງຢູທູບ
------------------------------------------------------------------------

ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບ ລັດຖະບານອົດສະຕຣາລີ ໄດ້ຜະລິດສື່ການຮຽນການສອນແບບໃໝ່ ໂດຍການນຳເອົາພາຍສຽງໃນວິຊາພາສາອັງກິດ ຊັ້ນປະຖົມສຶກສາປີທີ 4 (ປ.4) ຫຼາຍກວ່າ 100 ສຽງ ສ້າງເປັນວິດີໂອ ແລະ ໄດ້ຖືກອັບໂຫຼດລົງຊ່ອງທາງຢູທູບ ທີ່ມີຊື່ວ່າ "ວິດີໂອສຳລັບການພັດທະນາຄູ Teacher Development Videos".

ຕາມການລາຍງານຂອງແຜນງານບີຄວາ ເມື່ອບໍ່ດົນມານີ້ ໃຫ້ຮູ້ວ່າ: ຫຼັກສູດວິຊາພາສາອັງກິດສະບັບປັບປຸງໃໝ່ ຊັ້ນປະຖົມປີທີ 4 ແມ່ນໄດ້ຮັບການພັດທະນາຈາກກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ໄດ້ນຳໃຊ້ວິທີການເພື່ອການສື່ສານ ທີ່ຊ່ວຍໃຫ້ນັກຮຽນນຳໃຊ້ພາສາອັງກິດ ແລະ ສາມາດສື່ສານຕາມສະຖານະການຕົວຈິງ. ຫຼັກສູດຊັ້ນປະຖົມໃໝ່ນີ້, ໄດ້ເນັ້ນໜັກໃຫ້ມີການພັດທະນາທັກສະທາງດ້ານການຟັງ ແລະ ການເວົ້າ ເພື່ອໃຫ້ນັກຮຽນໄດ້ມີໂອກາດນຳໃຊ້ພາສາອັງກິດ ແລະ ພັດທະນາທັກສະການປາກເວົ້າ, ນັກຮຽນແມ່ນຈະໄດ້ຮັບການຊ່ວຍເຫຼືອດ້ວຍການອ່ານ ແລະ ການຂຽນ. ແຕ່ເນື່ອງຈາກວ່າ ການອອກສຽງ ແລະ ຄຳສັບໃນພາສາອັງກິດ ແມ່ນຍັງໃໝ່ ແລະ ຍາກສຳລັບຄູຫຼາຍຄົນໃນ ສປປ ລາວ. ດັ່ງນັ້ນ, ຄູຈຶ່ງຕ້ອງການຕົວຢ່າງໃນການສິດສອນ ເພື່ອອອກສຽງ ແລະ ເວົ້າຄຳສັບພາສາອັງກິດໃຫ້ຖືກຕ້ອງ ເພື່ອດຳເນີນການຮຽນການສອນ.

ທ່ານ ນາງ ມະໂນລີ ດົງວັນ ຮອງຜູ້ອຳນວຍການສູນສົ່ງເສີມພາສາຕ່າງປະເທດ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ກະຊວງສຶກສາທິການ ແລະ ກິລາ ໄດ້ອະທິບາຍວ່າ: "ຫຼັງຈາກທີ່ນັກຮຽນໄດ້ຮຽນຄຳສັບໃໝ່, ນັກຮຽນຈະຕ້ອງໄດ້ຝຶກການນຳໃຊ້ຄຳສັບເຫຼົ່ານັ້ນ ເພື່ອທີ່ຈະສາມາດນຳໃຊ້ຄຳສັບໃໝ່ເຫຼົ່ານັ້ນເຂົ້າໃນການສົນທະນາ, ໃນຊີວິດຕົວຈິງຂອງເຂົາເຈົ້າ. ສະນັ້ນ, ນີ້ຈຶ່ງເປັນຊ່ອງທາງໜຶ່ງທີ່ຈະຊ່ວຍໃຫ້ຄູໄດ້ເຂົ້າເຖິງວິທີການສິດສອນ ເພື່ອຊ່ວຍໃຫ້ການຮຽນການສອນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້. ດັ່ງນັ້ນ, ເມື່ອໄດ້ເລີ່ມຕົ້ນພັດທະນາປຶ້ມຮຽນວິຊາພາສາອັງກິດ ຊັ້ນ ປ.3, ພວກເຮົາໄດ້ຜະລິດສື່ທີ່ເປັນຄລິບສຽງ ເພື່ອຊ່ວຍຄູ ແລະ ນັກຮຽນ".

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງ 105 ພາຍສຽງວິຊາພາສາອັງກິດ ຊັ້ນ ປ.4 ທີ່ເປັນວິດີໂອ ຜ່ານຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos. ພາຍສຽງດັ່ງກ່າວ, ແມ່ນເພີ່ມຕື່ມ 101 ພາຍສຽງຂອງວິຊາພາສາອັງກິດ ຊັ້ນ ປ.3 ທີ່ໄດ້ຜະລິດໃນປີທີ່ຜ່ານມາ. ບັນດາພາຍສຽງ ແມ່ນສຽງຂອງຜູ້ທີ່ໃຊ້ພາສາອັງກິດເປັນພາສາຫຼັກ, ຫຼາກຫຼາຍອາຍຸ ແລະ ສຽງຕິ ເຫດການຈິງ, ຊຶ່ງບັນດາສຽງລວມມີພາກສຽງເວົ້າຂອງຄົນຜູ້ດຽວ, ສຽງຂອງບົດສົນທະນາ, ບົດເລື່ອງຕ່າງໆ, ບົດເພງ ແລະ ຕົວຢ່າງການອອກສຽງຂອງບັນດາສຽງໃໝ່. ໃນປຶ້ມຄູ່ມືຄູວິຊາພາສາອັງກິດຂອງຊັ້ນ ປ.4 ແມ່ນລວມມີຄຳແນະນຳກ່ຽວກັບບັນດາພາຍສຽງທີ່ນຳໃຊ້ ແລະ ລາຍລະອຽດຂອງສຽງທີ່ຢູ່ໃນວິຊາພາສາອັງກິດ ແລະ ວິຊາພາສາລາວ. ສະຖາບັນຄົ້ນຄວ້າວິທະຍາສາດການສຶ
ອອກມາໃນໄວໆນີ້.

ທ່ານ ນາງ ມະໂນລີ ຍັງໄດ້ກ່າວຕື່ມອີກວ່າ: "ການຜະລິດພາຍເປັນວິດີໂອ ຈະສາມາດຊ່ວຍຄູຝຶກນັກຮຽນໃຫ້ສາມາດອອກສຽງໄດ້ຄືກັບສຽງຈິງ. ພວກເຮົາຈະສາມາດສອນໃຫ້ນັກຮຽນໄດ້ອອກສຽງໃນພາສາອັງກິດທີ່ມີສຽງແຕກຕ່າງກັນ ແລະ ເຮັດໃຫ້ບົດຮຽນມີຄວາມມ່ວນຊື່ນ".

ນອກຈາກນີ້, ບັນດາພາຍສຽງເຫຼົ່ານີ້ ທາງຂະແໜງສື່ເອເລັກໂຕຣນິກ ແລະ ການສຶກສາທາງໄກ ຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໄດ້ຜະລິດວິດີໂອສຳລັບການພັດທະນາຄູໃນປີ 2022 ທີ່ໄດ້ສະແດງໃຫ້ຮູ້ເຕັກນິກຄຳແນະນຳການອອກສຽງໃນພາສາອັງກິດ, ການກອດການອອກສຽງທີ່ຖືກຕ້ອງ ແລະ ການຝຶກຂຽນຕົວອັກສອນ ສຳລັບສຽງທີ່ແຕກຕ່າງກັນ ພ້ອມທັງບັນດາຕົວອັກສອນທີ່ນັກຮຽນໄດ້ຮຽນໃນຊັ້ນ ປ.3 ແລະ ປ.4. ນອກຈາກນີ້, ວິດີໂອຍັງໄດ້ຖືກແປເປັນພາສາມື ເພື່ອໃຫ້ສາມາດເຂົ້າໃຈໄດ້ສຳລັບທຸກຄົນ.

"ຄູຊັ້ນປະຖົມສຶກສາ ແລະ ຄູຝຶກ ຈະໄດ້ນຳໃຊ້ວິດີໂອ ແລະ ສຽງຂອງສື່ການຮຽນການສອນ ທີ່ໄດ້ກະກຽມໄວ້ໃນບົດຮຽນ ແລະ ສຳລັບການຮຽນຮູ້ດ້ວຍຕົນເອງ ເພື່ອຝຶກເຕັກນິກການສອນດ້ວຍຫຼັກສູດໃໝ່ ແລະ ຝຶກການສອນດ້ວຍການປະຕິບັດຕົວຈິງ. ພວກເຂົາສາມາດເປີດພາຍສຽງໄດ້ໂດຍກົງ ເພື່ອໃຊ້ໃນຫ້ອງຮຽນ" ກ່າວໂດຍ ທ່ານ ຄຳຈັນ ລັດທະຍອດ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ).

"ປະຈຸບັນ ພວກເຮົາໄດ້ຮັບຫຼາຍກວ່າ 2,6 ລ້ານວິວ ຜ່ານຊ່ອງທາງຢູທູບ ວິດີໂອສຳລັບການພັດທະນາຄູ Teacher Development Videos". ຕົວເລກຂໍ້ມູນຜູ້ຊົມທີ່ຫຼາຍໃນລະດັບນີ້ ແມ່ນໄດ້ສະແດງໃຫ້ເຫັນວ່າ ຄູສ່ວນຫຼາຍມີຄວາມພໍໃຈຕໍ່ກັບສື່ດັ່ງກ່າວທີ່ສ້າງມາ. ບັນດາສື່ການຮຽນການສອນແມ່ນຍັງໄດ້ຖືກເຜີຍແຜ່ຜ່ານທາງຊ່ອງໂທລະພາບສຶກສາ ທີ່ໄດ້ອອກອາກາດຜ່ານທາງດາວທຽມລາວແຊັດ ຊ່ອງ 8, ໃນແທັບເລັດ ທີ່ໄດ້ແຈກຢາຍໃຫ້ແກ່ບັນດາເມືອງເປົ້າໝາຍ, ໃນຢູເອັດສະບີ ທີ່ໄດ້ແຈກຢາຍໃຫ້ແກ່ຄູ ແລະ ແພລດຟອມ ທົ່ງປັນຍາລາວ".

(ໂດຍ ດາວທອງດ)



| 2023-03-15 | Lao Tribune |
| --- | --- |

March 15, 2023 - Technology

## MoES, Australian release new materials on YouTube to support English teaching in primary schools

(KPL) The new Grade 4 English primary curriculum developed by the Ministry of Education and Sports (MoES), with support from the Australian Government through the BEQUAL programme, has been designed using a communicative approach to help students use English and communicate in real-life situations.

There is a strong focus on developing listening and speaking skills to provide students with plenty of exposure to English and to develop the oral language skill required to support reading and writing. But pronouncing the sounds and words in English is a new and difficult skill for most teachers in Laos. Without any modelling, teachers won't know how to pronounce the sounds correctly and thus won't be able to teach them.

Ms Manoly Dongvan, Deputy Director of Foreign Language Resource Center explains "When students learn a new language, they need exposure to the language with multiple opportunities to listen to it. It can be challenging for teachers in Laos to provide the level of input students need, especially if they do not feel confident about their own English. This is why, since the start of English lessons in Grade 3, we have produced audio materials to support the teachers and the students."

The Research Institute of Educational Sciences (RIES) with support from Australia has just released 105 short animated Grade 4 audio tracks on the ?????????????????????? Teacher Development Videos YouTube channel. The audio tracks are in addition to the 101 Grade 3 English audio tracks produced last year.

They were recorded by native English speakers of a range of ages and are very lively. They include simple monologues and dialogues as well as stories, songs and model pronunciation of the new phonics. The accompanying animations are composed of illustrations from the Grade 4 English textbooks.

The Grade 4 English teacher guide includes instructions about which tracks to use as well as transcripts of the audio tracks in both English and Lao. RIES has also recently started recording audio tracks to complement the forthcoming Grade 5 curriculum.

"Using the animated audio materials will enable Lao teachers to give their students plenty of authentic language input. They will be able to expose their students to a range of English accents and make lessons more active and entertaining" adds Mrs Manoly.

In addition to those audio tracks, the E-learning department of RIES released three teacher development videos in 2022 to demonstrate the methodology of the English Phonics instruction as well as the correct pronunciation and letter formation for the different sounds and letters that students will learn in Grade 3 and 4 English classes. The videos are dubbed in Sign Language to be more accessible to all.

"Primary teachers and trainers use the videos and the audio materials for lesson preparation and self-learning on the new curriculum teaching techniques and on active learning. They can also play the audio tracks directly in the classroom" explains Mr Khamchan Lattayord, Deputy Director general of RIES. "We have now reached over 2.6 million views on the dedicated "?????????????????????? Teacher Development Videos" YouTube channel; this high audience engagement level proves that teachers highly appreciate the materials we produce. The materials are also disseminated on Lao Education and Sports TV on Lao Sat Channel 8, tablets for target districts, USB to teachers and on the Khang Panya Lao platform."

| 2023-03-16 | Vientiane Times Website |
| --- | --- |

LAO PRESS IN FOREIGN LANGUAGES

# Vientiane Times

www.vientianetimes.org.la www.vientianetimes.la

Home | About Us | Lao | Chinese | Facebook Page | Video Clips | Previous | E-Paper | Links | Partners | Advertise | Subscribe | Payments | Log In

**Online study materials help young English learners make the grade**

Primary school teachers and students in state schools are now able to make use of online teaching skills and learning in English, thanks to the support of the governments of Laos and Australia.
The Lao Ministry of Education and Sports, with the support of the Australian government, has uploaded new materials on YouTube to strengthen English teaching and learning in primary schools.



**Primary school children learn English phonics.**

Over 100 Grade 4 English animated audio tracks have been uploaded to the Teacher Development Videos YouTube channel.
The new Grade 4 English primary school curriculum has been designed using a communicative approach to help children use English and communicate in real-life situations.
There is a strong focus on listening and speaking skills to provide students with plenty of exposure to English and to develop the oral language skills required to enable reading and writing.
Deputy Director of the Foreign Language Resource Centre, Mrs Manoly Dongvan, said "When children learn a new language, they need exposure to that language with multiple opportunities to listen to it. It can be challenging for teachers in Laos to provide the level of input that students need, especially if they do not feel confident about their own English."
The new animated Grade 4 audio tracks posted by the ministry's Research Institute of Educational Sciences were recorded by native English speakers of a range of ages and are very lively.
They include simple monologues and dialogues as well as stories, songs and model pronunciation of phonics. The accompanying animations are composed of illustrations from the Grade 4 English textbooks.
The Grade 4 English teacher guide includes instructions about which tracks to use as well as transcripts of the audio tracks in both English and Lao.
The Research Institute of Educational Sciences has also recently started recording audio tracks to complement the forthcoming Grade 5 curriculum.
In addition to those audio tracks, the Institute's E-learning department released teacher development videos in 2022 to demonstrate the methodology of English phonics instruction, as well as the correct pronunciation and letter formation for the different sounds and letters that students will learn in Grades 3 and 4 English classes.
The videos are dubbed in Sign Language so they are more accessible to all.
Deputy Director General of the Research Institute of Educational Sciences, Mr Khamchan Lattayord, said "We have now reached over 2.6 million views on the dedicated "Teacher Development Videos" YouTube channel. This high audience engagement level proves that teachers greatly appreciate the materials we produce."

**By Times Reporters**
**(Latest Update March 16, 2023)**

| 2023-03-16 | Lao Economic Daily Website |
|---|---|

# ແຜນງານບິຄວາ ຜະລິດສື່ການຮຽນ-ການສອນ ແບບໃໝ່ ສົ່ງເສີມການຮຽນວິຊາພາສາອັງກິດຊັ້ນປະຖົມສຶກສາ ຜ່ານຊ່ອງທາງຢູທູບ

By **admin laoedaily** - March 16, 2023 · 23




ຫຼັກສູດວິຊາພາສາອັງກິດສະບັບປັບປຸງໃໝ່ ຂອງຊັ້ນປະຖົມປີທີ 4 ແມ່ນໄດ້ຮັບການພັດທະນາໂດຍ ກະຊວງສຶກສາທິການ ແລະ ກິລາ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ, ໄດ້ນຳໃຊ້ວິທີການເພື່ອການສື່ສານ ທີ່ຊ່ວຍໃຫ້ນັກຮຽນນຳໃຊ້ພາສາອັງກິດ ແລະ ສາມາດສື່ສານຕາມສະຖານະການຕົວຈິງ. ຫຼັກສູດຊັ້ນປະຖົມໃໝ່ນີ້ໄດ້ເນັ້ນໜັກໃຫ້ມີການພັດທະນາທັກສະທາງດ້ານການຟັງ ແລະ ການເວົ້າ. ເພື່ອໃຫ້ນັກຮຽນໄດ້ມີໂອກາດນຳໃຊ້ພາສາອັງກິດ ແລະ ພັດທະນາທັກສະການປາກເວົ້າ ນັກຮຽນແມ່ນຈະໄດ້ຮັບການຊ່ວຍເຫຼືອດ້ວຍການອ່ານ ແລະ ການຂຽນ. ແຕ່ເນື່ອງຈາກວ່າ ການອອກສຽງ ແລະ ຄຳສັບໃນພາສາອັງກິດ ແມ່ນຫຍັງໃໝ່ ແລະ ເປັນສິ່ງທີ່ຍາກສຳລັບຄູຫຼາຍຄົນໃນລາວ ຄູຈຶ່ງຕ້ອງການຕົວຢ່າງໃນການສິດສອນເພື່ອອອກສຽງ ແລະ ເວົ້າຄຳສັບພາສາອັງກິດໃຫ້ຖືກຕ້ອງເພື່ອດຳເນີນການຮຽນການສອນ.

ທ່ານ ນາງ ມະໂນລີ ດົງວັນ ຮອງຜູ້ອຳນວຍການສູນສົ່ງເສີມພາສາຕ່າງປະເທດ ໄດ້ອະທິບາຍວ່າ: ຫຼັງຈາກທີ່ນັກຮຽນໄດ້ຮຽນຄຳສັບໃໝ່, ນັກຮຽນຈະຕ້ອງໄດ້ຝຶກການນຳໃຊ້ຄຳສັບເຫຼົ່ານັ້ນເພື່ອທີ່ຈະສາມາດນຳໃຊ້ຄຳສັບໃໝ່ເຫຼົ່ານັ້ນເຂົ້າໃນການສົນທະນາ, ໃນຊີວິດຕົວຈິງຂອງເຂົາເຈົ້າ. ເພາະສະນັ້ນ, ນີ້ຈຶ່ງເປັນຊ່ອງທາງໜຶ່ງທີ່ຈະຊ່ວຍໃຫ້ຄູໄດ້ເຂົ້າເຖິງວິທີການສິດສອນເພື່ອຊ່ວຍໃຫ້ການຮຽນການສອນໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້. ດັ່ງນັ້ນ, ເມື່ອໄດ້ເລີ່ມຕົ້ນພັດທະນາບົດຮຽນວິຊາພາສາອັງກິດຊັ້ນ ປ.3, ພວກເຮົາກໍ່ໄດ້ຜະລິດສື່ທີ່ເປັນຄລິບສຽງເພື່ອຊ່ວຍຄູ ແລະ ນັກຮຽນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໄດ້ສ້າງ 105 ຟາຍສຽງວິຊາພາສາອັງກິດຂັ້ນ ປ.4 ທີ່ເປັນວິດີໂອ ຜ່ານຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos. ຟາຍສຽງດັ່ງກ່າວ ແມ່ນເພີ່ມຕື່ມ 101 ຟາຍສຽງຂອງວິຊາພາສາອັງກິດຂັ້ນ ປ.3 ເຊິ່ງໄດ້ຜະລິດໃນປີທີ່ຜ່ານມາ. ບັນດາຟາຍສຽງແມ່ນສຽງຂອງຜູ້ທີ່ໃຊ້ພາສາອັງກິດເປັນພາສາຫຼັກ, ຫຼາກຫຼາຍອາຍຸ ແລະ ສຽງຄືເຫດການຈິງ. ເຊິ່ງບັນດາສຽງລວມມີພາກສຽງເວົ້າຂອງຄົນຜູ້ດຽວ, ສຽງຂອງບົດສົນທະນາ, ບົດເລື່ອງຕ່າງໆ, ບົດເພງ ແລະ ຕົວຢ່າງການອອກສຽງຂອງບັນດາສຽງໃໝ່. ໃນປື້ມຄູ່ມືຄູວິຊາພາສາອັງກິດຂອງຂັ້ນ ປ.4 ແມ່ນລວມມີຄຳແນະນຳກ່ຽວກັບບັນດາຟາຍສຽງທີ່ນຳໃຊ້ ແລະ ລາຍລະອຽດຂອງສຽງທີ່ຢູ່ໃນວິຊາພາສາອັງກິດ ແລະ ວິຊາພາສາລາວ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ປະຈຸບັນນີ້ ແມ່ນໄດ້ເລີ່ມອັດສຽງເພື່ອປະກອບເຂົ້າໃນຫຼັກສູດຊັ້ນປະຖົມສຶກສາປີທີ 5 ທີ່ກຳລັງຈະອອກມາໃນໄວໆນີ້.

ທ່ານ ນາງ ມະໂນລີ ຍັງໄດ້ກ່າວຕື່ມອີກວ່າ: ການຜະລິດຟາຍເປັນວິດີໂອຈະສາມາດຊ່ວຍຄູສາມາດຝຶກນັກຮຽນໃຫ້ສາມາດອອກສຽງໄດ້ຄືກັບສຽງຈິງ. ພວກເຂົາຈະສາມາດສອນໃຫ້ນັກຮຽນໄດ້ອອກສຽງໃນພາສາອັງກິດທີ່ມີສຽງແຕກຕ່າງກັນ ແລະ ເຮັດໃຫ້ບົດຮຽນມີຄວາມມ່ວນຊື່ນ. ນອກຈາກນີ້, ບັນດາຟາຍສຽງເຫຼົ່ານີ້ ທາງຂະແໜງສື່ເອເລັກໂຕຼນິກ ແລະ ການສຶກສາທາງໄກ ຂອງສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາໄດ້ຜະລິດວິດີໂອສຳລັບການພັດທະນາຄູໃນປີ 2022 ທີ່ໄດ້ສະແດງໃຫ້ຮູ້ເຕັກນິກຄຳແນະນຳການອອກສຽງໃນພາສາອັງກິດ, ການກວດການອອກສຽງທີ່ຖືກຕ້ອງ ແລະ ການຝຶກຂຽນຕົວອັກສອນ ສຳລັບສຽງທີ່ແຕກຕ່າງກັນ ພ້ອມທັງ ບັນດາຕົວອັກສອນທີ່ນັກຮຽນໄດ້ຮຽນໃນຂັ້ນ ປ.3 ແລະ ໃນຂັ້ນ ປ.4. ວິດີໂອຍັງໄດ້ຖືກແປເປັນພາສາມືເພື່ອໃຫ້ສາມາດເຂົ້າໃຈໄດ້ສຳລັບທຸກຄົນ.

ທ່ານ ຄຳຈັນ ລັດທະຍອດ ຮອງຜູ່ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ (ສວສ) ກ່າວບາງຕອນວ່າ: ຄູຊັ້ນປະຖົມສຶກສາ ແລະ ຄູຝຶກ ຈະໄດ້ນຳໃຊ້ວິດີໂອ ແລະ ສຽງຂອງສື່ການຮຽນ-ການສອນ ເຊິ່ງໄດ້ກະກຽມໃສ່ໃນບົດຮຽນ ແລະ ສຳລັບການຮຽນຮູ້ດ້ວຍຕົນເອງ ເພື່ອຝຶກເຕັກນິກການສອນດ້ວຍຫຼັກສູດໃໝ່ ແລະ ຝຶກການສອນດ້ວຍການປະຕິບັດຕົວຈິງ. ພວກເຂົາສາມາດເປີດຟາຍສຽງໄດ້ໂດຍກົງເພື່ອໃຊ້ໃນຫ້ອງຮຽນ.

ປະຈຸບັນ ພວກເຮົາໄດ້ຮັບຫຼາຍກ່ວາ 2,6 ລ້ານວິວ ຜ່ານທາງຊ່ອງທາງຢູທູບວິດີໂອສຳລັບການພັດທະນາຄູ Teacher Development Videos". ຕົວເລກຂໍ້ມູນຜູ້ຊົມທີ່ຫຼາຍໃນລະດັບນີ້ ແມ່ນໄດ້ສະແດງໃຫ້ເຫັນວ່າ ຄູສ່ວນຫຼາຍແມ່ນມີຄວາມພໍໃຈຕໍ່ກັບສິ່ງດັ່ງກ່າວທີ່ສ້າງມາ. ບັນດາສື່ການຮຽນການສອນແມ່ນຍັງໄດ້ຖືກເຜີຍແພ່ຜ່ານທາງຊ່ອງໂທລະພາບສຶກສາທີ່ໄດ້ອອກອາກາດຜ່ານທາງດາວທຽມລາວແຊັດ ຊ່ອງ 8, ໃນແທັບເລັດ ທີ່ໄດ້ແຈກຢາຍໃຫ້ແກ່ບັນດາເມືອງເປົ້າໝາຍ, ໃນຢູເອສບີ ທີ່ໄດ້ແຈກຢາຍໃຫ້ແກ່ຄູ ແລະ ແພຼດຟອມ ຄັງປັນຍາລາວ. (ສຳລັບລີ້ງ ການຮຽນ-ການສອນ https://www.dropbox.com/s/vc2rzbem95u...ຫຼື https://youtu.be/pXq2Elv02fE )